ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ: 0349/ ອຄ.ນຄຕ

ນະຄອນຫຼວງວຽງຈັນ, ວັນທີ 22 FEB 2011

# ຂໍ້ຕົກລົງ
# ວ່າດ້ວຍ
# ຈຸດສອບຖາມຂໍ້ມູນການຄ້າດ້ານການບໍລິການ

- ອີງຕາມດຳລັດວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ການຄ້າ ສະບັບເລກທີ 188/ນຍ ລົງວັນທີ 17 ສິງຫາ 2006;
- ອີງຕາມດຳລັດວ່າດ້ວຍການແຈ້ງ ແລະ ການສະໜອງຂໍ້ມູນທີ່ຕິດພັນກັບການຄ້າທີ່ 363/ນຍ ລົງວັນທີ 19 ສິງຫາ 2010 ແລະ
- ອີງຕາມໜັງສືສະເໜີຂອງກົມນະໂຍບາຍການຄ້າຕ່າງປະເທດ ສະບັບເລກທີ 0249/ນຄຕ.ຫຼຝ , ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຈຸດສອບຖາມຂໍ້ມູນການຄ້າດ້ານການບໍລິການ (ຕໍ່ໄປນີ້ເອີ້ນວ່າ "ຈຸດສອບຖາມ ຫຼື ໃນພາສາອັງກິດ ແມ່ນເພື່ອຜັນຂະຫຍາຍ ແລະ ຈັດຕັງປະຕິບັດດຳລັດວ່າດ້ວຍການ ການສະໜອງຂໍມູນທີ່ຕິດພັນກັບການຄ້າ ສະບັບເລກທີ 363/ນຍ ລົງວັນທີາເອີ້ນວາ "ດຳລັດ 363")

**ມາດຕາ 2. ຂໍ້ມູນການຄ້າດ້ານການບໍລິການ**

ຂໍ້ມູນການຄ້າດ້ານການບໍລິການ ໝາຍເຖິງ ຂໍ້ມູນກ່ຽວກັບມາດຕະການທີ່ສົ່ງຜົນຕໍ່ການຄ້າດ້ານການບໍລິການ ແລະ ສັນຍາການຄ້າດ້ານການບໍລິການ ທີ ສປປ ລາວ ເປັນພາຄີໃນນີ້

ມາດຕະການທີ່ສົ່ງຜົນຕໍ່ການຄ້າດ້ານການບໍລິການ ລວມມີ ກົດໝາຍ ດໍາລັດ ລະ ບຽບການ ຂັ້ນຕອນ ແລະ ການດໍາເນີນການດ້ານບໍລິຫານທີ່ຕິດພັນກັບການຊື້, ການຈ່າຍ ການເຂົ້າເຖິງ, ການນໍາໃຊ້ ແລະ ການສະໜອງການບໍລິການ

## ໝວດທີ 2

## ທີ່ຕັ້ງ ພາລະບົດບາດ ແລະ ໂຄງປະກອບບຸກຄະລາກອນ

**ມາດຕາ 3. ທີ່ຕັ້ງ ແລະ ພາລະບົດບາດ**

ຈຸດສອບຖາມ ມີທີ່ຕັ້ງຢູ່ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ມີພາລະບົດບາດໃນການປະຕິບັດໜ້າທີ່ໃນນາມ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 5 ວັກ 3 ຂອງ ດາລັດ 363.

**ມາດຕາ 4 ໂຄງປະກອບບຸກຄະລາກອນ**

ຈຸດສອບຖາມ ປະກອບດ້ວຍ ບຸກຄະລາກອນຈໍານວນໜຶ່ງ.

ມອບໃຫ້ກົມນະໂຍບາຍການຄ້າຕ່າງປະເທດ ເປັນຜູ້ແຕ່ງຕັ້ງບຸກຄະລາກອນ ແລະ ຂໍ້ມູນການຕິດຕໍ່ຂອງຈຸດສອບຖາມດັ່ງກ່າວ ແລະ ແຈ້ງຈຸດດັ່ງກ່າວໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງຊາບ.

## ໝວດທີ 3

## ສິດ ແລະ ໜ້າທີ່

ມາດຕາ 5. ສິດ

ຈຸດສອບຖາມ ມີສິດດັ່ງນີ້:

1. ປະສານງານໂດຍກົງເພື່ອຂໍຂໍ້ມູນການຄ້າດ້ານການບໍລິການກັບຂະແໜງການຕ່າງໆ;
2. ຕອບຄໍາຖາມ ແລະ ສະໜອງຂໍ້ມູນການຄ້າດ້ານການບໍລິການ ຕາມການຮ້ອງຂໍ;
3. ເຂົ້າຮ່ວມ ຫຼື ຈັດກອງປະຊຸມ ສໍາມະນາ ແລະ ຝຶກອົບຮົມຕ່າງໆ ທີ່ກ່ຽວກັບວຽກ ງານຂອງຈຸດສອບຖາມ ແລະ
4. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

ມາດຕາ 6. ໜ້າທີ່

ຈຸດສອບຖາມມີໜ້າທີ່ ດັ່ງນີ້:

1. ຕອບຄໍາຖາມຂອງທຸກພາກສ່ວນ ທີ່ກ່ຽວກັບຂໍ້ມູນການຄ້າດ້ານການບໍລິການ ພາຍໃນ

ກຳນົດເວລາອັນເໝາະສົມ;

2. ຈັດຝຶກອົບຮົມໃຫ້ແກ່ພະນັກງານຂອງຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບວິທີການປະສານງານ ແລະ ການດຳເນີນການສະໜອງຂໍ້ມູນການຄ້າດ້ານການບໍລິການ;
3. ຄົ້ນຄ້ວາ ແລະ ສະເໜີປັບປຸງກົນໄກການປະສານງານ ແລະ ດ້ານອື່ນໆ ຂອງຈຸດສອບຖາມ ໃຫ້ມີປະສິດທິຜົນດີຂຶ້ນ;
4. ລາຍງານເປັນປະຈຳ ໃຫ້ຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ກ່ຽວກັບການເຄື່ອນໄຫວຂອງຈຸດສອບຖາມ; ແລະ
5. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ.

**ໝວດທີ 4**

**ລະບອບແບບແຜນວິທີເຮັດວຽກ, ງົບປະມານ ແລະ ກາປະທັບ**

**ມາດຕາ 7. ແຜນວິທີເຮັດວຽກ**

ໃຫ້ຈຸດສອບຖາມກຳນົດແບບ ແຜນວິທີເຮັດວຽກທີ່ເໝາະສົມ ໂດຍໃນນັ້ນ ຕ້ອງປະຕິບັດດັ່ງນີ້:

1. ລ້າງ ແລະ ຮັກສາລະບົບຖານຂໍ້ມູນທາງເອເລັກໂຕນິກ ເພື່ອຮັບໃຊ້ວຽກງານການ ສະໜອງຂໍ້ມູນຂອງຈຸດສອບຖາມ;
2. ພາຍຫຼັງໄດ້ຮັບຄຳຖາມກ່ຽວກັບຂໍ້ມູນການຄ້າດ້ານການບໍລິການ, ໃຫ້ຈຸດສອບຖາມຄົ້ນ ຄວ້າ ແລະ ຕອບ ພາຍໃນກຳນົດເວລາອັນເໝາະສົມ ຖ້າຈຸດສອບຖາມບໍ່ມີ ຄຳຕອບຕໍ່ຄຳຖາມທີ່ໄດ້ຮັບ ໃຫ້ຈຸດສອບຖາມ ສົ່ງຄຳຖາມດັ່ງກ່າວໄປຍັງ ຈຸດປະສານງານຢູ່ຂະແໜງການຄຸ້ມຄອງຂະແໜງບໍລິການທີ່ກ່ຽວຂ້ອງ ໄວເທົ່າທີ່ຈະໄວໄດ້ ເພື່ອຂໍຄຳຕອບເປັນລາຍລັກອັກສອນ ໂດຍກຳນົດໄລຍະເວລາທີ່ຂະແໜງການດັ່ງ ກ່າວຕ້ອງໃຫ້ຄຳຕອບ ແລະ
3. ມີການປະຊຸມຢ່າງໜ້ອຍທຸກໆ ສາມເດືອນ ຫຼື ຕາມການສະເໜີຂອງຈຸດປະສານງາໃດໜຶ່ງ

**ມາດຕາ 8. ງົບປະມານ**

ງົບປະມານຂອງຈຸດສອບຖາມ ແມ່ນໃຫ້ລວມຢູ່ໃນງົບປະມານຂອງກົມນະໂຍບາຍການຄ້າ

ຕ່າງປະເທດ

**ມາດຕາ 9. ກາປະທັບ**

ໃຫ້ຈຸດສອບຖາມໃຊ້ກາປະທັບຂອງກົມນະໂຍບາຍການຄ້າຕ່າງປະເທດ ເປັນກາປະທັບໃນການເຄື່ອນໄຫວວຽກງານຂອງຕົນ

## ໝວດທີ 5

## ບົດບັນຍັດສຸດທ້າຍ

**ມາດຕາ 10. ການຈັດຕັ້ງປະຕິບັດ**

ໃຫ້ກົມນະໂຍບາຍການຄ້າຕ່າງປະເທດ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ທຸກພາກສ່ວນພາຍໃນຂະແໜງອຸດສາຫະກໍາ ແລະ ການຄ້າ ອໍານວຍຄວາມສະດວກທຸກຢ່າງຕາມການຮ້ອງຂໍຂອງຈຸດສອບຖາມເພື່ອຈັດຕັ້ງປະຕິບັດການສະໜອງຂໍ້ມູນ.

ຂະແໜງການອື່ນຈົ່ງຮັບຊາບ ແຕ່ງຕັ້ງຈຸດປະສານງານຂອງຕົນ ແລະ ໃຫ້ຄວາມຮ່ວມມືຕາມຄວາມເໝາະສົມ ແລະ ບົນພື້ນຖານຂອງດໍາລັດ 363.

**ມາດຕາ 11. ຜົນສັກສິດ**

**ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.**

ລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ

ດຣ. ນາມ ວິຍະເກດ